ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສຳນັກງານໃຫຍ່

ເລກທີ: 028 /ທຄຕລ.....2020.........
ນະຄອນຫຼວງວຽງຈັນ, ວັນທີ: 16 MAR 2020

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ເຖິງ** : ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນປະມູນສະເໜີລາຄາວຽກງານກໍ່ສ້າງ ແລະ ຕົບແຕ່ງໜ່ວຍບໍລິການ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງສະເໜີລາຄາປະເມີນວຽກຕົບແຕ່ງ ແລະ ກໍ່ສ້າງໜ່ວຍບໍລິການໃໝ່ ດັ່ງນີ້:

- ກໍ່ສ້າງໜ່ວຍບໍລິການສະໜາມໄຊ ຕັ້ງຢູ່ ບ້ານມິດສຳພັນ, ເມືອງສະໜາມໄຊ, ແຂວງອັດຕະປື;
- ກໍ່ສ້າງໜ່ວຍບໍລິການເມືອງພຽງ ຕັ້ງຢູ່ ບ້ານນ້ຳປຸຍ, ເມືອງພຽງ, ແຂວງໄຊຍະບູລີ
- ຕົບແຕ່ງຫ້ອງບໍລິການລູກຄ້າ VIP ຕຶກ A ຊັ້ນ 2 ສຳນັກງານໃຫຍ່ ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ

1. ບໍລິສັດ ສາມາດພົວພັນເອົາເອກະສານປະມູນ ເລີ່ມວັນທີ 16/03/2020, ເວລາ 08:30 - 16:30 ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ເກັບຄ່າທຳນຽມເອກະສານ ຈຳນວນເງິນ 250.000 ກີບ, ລາຍລະອຽດເອກກະສານປະກອບມີດັ່ງນີ້:
   ກ. ແບບຟອມການຍື່ນຊອງປະມູນ.
   ຂ. ໃບປະເມີນລາຄາ 1 ຊຸດ.
   ຄ. ແບບຕົບແຕ່ງ 1 ຊຸດ.

2. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:
   - ຊອງທີ 1:
   ກ. ໃບທະບຽນວິສາຫະກິດ
   ຂ. ໃບອະນຸຍາດດຳເນີນທຸລະກິດປີ 2019 ຫຼື 2020
   ຄ. ໃບຢັ້ງຢືນການເສຍອາກອນ 3 ປີຍ້ອນຫຼັງ (2017, 2018, 2019)
   ງ. ໃບຢັ້ງຢືນຖານະການເງິນ ປີ 2019 (ອອກໃຫ້ໂດຍທະນາຄານ)
   ຈ. ບັນຊີພາຫະນະຮັບໃຊ້ວຽກ ແລະ ອຸປະກອນຂອງບໍລິສັດ
   ສ. ບັນຊີພະນັກງານຄຸ້ມຄອງ ແລະ ວິຊາການຂອງບໍລິສັດ
   ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືສະເພາະດ້ານຕົບແຕ່ງ ແລະ ກໍ່ສ້າງໜ່ວຍບໍລິການ ຫຼື ສາຂາທະນາຄານຢ່າງໜ້ອຍ 4 ປີ ແລະ 4 ໂຄງການຂຶ້ນໄປ
   ລາຍລະອຽດຕາມແບບຟອມທີ່ຕິດຄັດດ້ານຫຼັງ.
   ຊອງທີ 2: ໃບປະເມີນລາຄາຕ້ອງເປັນສະກຸນເງິນກີບທີ່ປະກອບສຳເລັດແລ້ວ 1 ຊຸດ

3. ຍື່ນເອກະສານສະເໜີລາຄາ ພ້ອມທັງເອກະສານດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານອື່ນໆ ມາຍັງພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ໃນວັນທີ 22/04/2020 ແລະ ຈະປິດການຮັບຊອງເວລາ 09:00 ໂມງ ຂອງວັນດຽວກັນ.

4. ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບເຕັກນິກການຕົບແຕ່ງ ແລະ ກໍ່ສ້າງກ່ອນການຍື່ນຊອງ ຈາກວັນທີ 16/03/2020 - 22/04/2020, ໃນຊ່ວງເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ